# (ໂຄງຮ່າງໃຫຍ່)

# ກົດໝາຍ

# ວ່າດ້ວຍການຮ່ວມມືທາງອາຍາລະຫວ່າງປະເທດ

ພາກທີ I ບົດບັນຍັດທົ່ວໄປ

ພາກທີ II ການຮ່ວມມືທາງອາຍາລະຫວ່າງປະເທດ

ໝວດທີ 1 ຂອບເຂດ ແລະ ການປະຕິເສດການຮ່ວມມື

ໝວດທີ 2 ການຮ້ອງຂໍ ແລະ ການພິຈາລະນາການຮ້ອງຂໍ

ໝວດທີ 3 ການດຳເນີນການຮ່ວມມືທາງອາຍາລະຫວ່າງປະເທດ

ໝວດທີ 4 ການປະຕິບັດຄຳຕັດສີນຄະດີອາຍາຂອງຕ່າງປະເທດ

ພາກທີ III ການຮ້ອງຂໍການຮ່ວມມືທາງອາຍາ ຂອງ ສປປ ລາວ

ພາກທີ IV ຂໍ້ຫ້າມ

ພາກທີ V ການຄຸ້ມຄອງ ແລະ ກວດກາ

ໝວດທີ 1 ການຄຸ້ມຄອງວຽກງານການຮ່ວມມືທາງອາຍາລະຫວ່າງປະເທດ

ໝວດທີ 2 ການກວດກາວຽກງານການຮ່ວມມືທາງອາຍາລະຫວ່າງປະເທດ

ພາກທີ VI ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ພາກທີ VII ບົດບັນຍັດສຸດທ້າຍ

# (ໂຄງຮ່າງລະອຽດ)
# ກົດໝາຍ
# ວ່າດ້ວຍການຮ່ວມມືທາງອາຍາລະຫວ່າງປະເທດ


## ພາກທີ I ບົດບັນຍັດທົ່ວໄປ

ມາດຕາ 1 ຈຸດປະສົງ

ມາດຕາ 2 ການຮ່ວມມືທາງອາຍາລະຫວ່າງປະເທດ

ມາດຕາ 3 ການອະທິບາຍຄຳສັບ

ມາດຕາ 4 ຫຼັກການການຮ່ວມມືທາງອາຍາລະຫວ່າງປະເທດ

ມາດຕາ 5 ຂອບເຂດການນຳໃຊ້ກົດໝາຍ

ມາດຕາ 6 ການຮ່ວມມືສາກົນ

## ພາກທີ II ການຮ່ວມມືທາງອາຍາລະຫວ່າງປະເທດ

### ໝວດທີ 1 ຂອບເຂດ ແລະ ການປະຕິເສດການຮ່ວມມື

ມາດຕາ 7 ຂອບເຂດການຮ່ວມມືທາງອາຍາລະຫວ່າງປະເທດ

ມາດຕາ 8 ການປະຕິເສດການໃຫ້ການຮ່ວມມື

### ໝວດທີ 2 ການຮ້ອງຂໍ ແລະ ການພິຈາລະນາການຮ້ອງຂໍ

ມາດຕາ 9 ການຍື່ນ ຫຼື ຮັບຄຳຮ້ອງຂໍການຮ່ວມມືທາງອາຍາລະຫວ່າງປະເທດ

ມາດຕາ 10 ຄຳຮ້ອງຂໍ ແລະ ເອກະສານປະກອບ

ມາດຕາ 11 ການພິຈາລະນາຄຳຮ້ອງຂໍການຮ່ວມມືທາງອາຍາລະຫວ່າງປະເທດ

ມາດຕາ 12 ການຂໍຂໍ້ມູນເພີ່ມເຕີມ

ມາດຕາ 13 ກຳນົດເວລາ

ມາດຕາ 14 ການຮັກສາຄວາມລັບຂອງຂໍ້ມູນ

### ໝວດທີ 3 ການດຳເນີນການຮ່ວມມືທາງອາຍາລະຫວ່າງປະເທດ

ມາດຕາ 15 ການເອົາຄຳໃຫ້ການ

ມາດຕາ 16 ການເອົາຫຼັກຖານ

ມາດຕາ 17 ການປະຕິເສດ ສະໜອງຫຼັກຖານ

ມາດຕາ 18 ການເຂົ້າຮ່ວມຂອງບຸກຄົນ ຢູ່ໃນລັດທີ່ຮ້ອງຂໍ

ມາດຕາ 19 ການບໍ່ຖືເປັນຫຼັກຖານ

ມາດຕາ 20 ການເຂົ້າຮ່ວມຂອງບຸກຄົນທີ່ຖືກປະຕິບັດໂທດ ຫຼື ຖືກກັກຂັງ ຢູ່ ສປປ ລາວ

ມາດຕາ 21 ມາດຕະການຄວາມປອດໄພ

ມາດຕາ 22 ບ່ອນຢູ່ ຫຼື ເອກະລັກບຸກຄົນ

ມາດຕາ 23 ການກວດຄົ້ນ ແລະ ການຍຶດຫຼັກຖານ

ມາດຕາ 24 ການ ຍຶດ ຫຼື ອາຍັດ

ມາດຕາ 25 ການສົ່ງຫຼັກຖານຄືນ

ມາດຕາ 26 ການຢັ້ງຢືນ ແລະ ການກວດກາຄວາມຖືກຕ້ອງຂອງເອກະສານ

ມາດຕາ 27 ການຕິດຕໍ່ສື່ສານດ້ວຍວີດີໂອ ຫຼື ສຽງຜ່ານດາວທຽມ ຫຼື ອິນເຕີເນັດ

ມາດຕາ 28 ຄ່າໃຊ້ຈ່າຍໃນການປະຕິບັດຄໍາຮ້ອງຂໍການຮ່ວມມືທາງອາຍາລະຫວ່າງປະເທດ

ມາດຕາ 29 ການແຈ້ງຜົນ

ໝວດທີ 4 ການປະຕິບັດຄໍາຕັດສິນຄະດີອາຍາຂອງຕ່າງປະເທດ

ມາດຕາ 30 ການປະຕິບັດຄໍາຕັດສິນຄະດີອາຍາຂອງຕ່າງປະເທດ

ມາດຕາ 31 ການພິຈາລະນາ ກ່ຽວກັບ ການປະຕິບັດຄໍາຕັດສິນຄະດີອາຍາຂອງຕ່າງປະເທດ

ມາດຕາ 32  ສິດຂອງສານ ໃນການພິຈາລະນາ ກ່ຽວກັບ ການປະຕິບັດຄໍາຕັດສິນຄະດີອາຍາຂອງຕ່າງປະເທດ

ມາດຕາ 33 ການລົບລ້າງຄໍາສັ່ງຍຶດ ຫຼື ອາຍັດຊັບ

ມາດຕາ 34 ການມອບຊັບໃຫ້ລັດທີ່ຮ້ອງຂໍ

ພາກທີ III ການຮ້ອງຂໍການຮ່ວມມືທາງອາຍາ ຂອງ ສປປ ລາວ

ມາດຕາ 35ການປະກອບຄໍາຮ້ອງຂໍການຮ່ວມືທາງອາຍາ

ມາດຕາ 36 ການພິຈາລະນາຂອງການດໍາເນີນຄະດີອາຍາ

ມາດຕາ 37 ການພິຈາລະນາຂອງອົງການໃຈກາງປະສານງານ

ມາດຕາ 38 ການເຂົ້າຮ່ວມການພິຈາລະນາການປະຕິບັດຄໍາຮ້ອງຂໍຢູ່ຕ່າງປະເທດ

ມາດຕາ 39  ການມອບໝາກຜົນຂອງການຮ່ວມມືທາງອາຍາ

ພາກທີ IVຂໍ້ຫ້າມ

ມາດຕາ 40 ຂໍ້ຫ້າມທົ່ວໄປ

ມາດຕາ 41 ຂໍ້ຫ້າມສໍາລັບ ເຈົ້າໜ້າທີ່ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ

ພາກທີ Vການຄຸ້ມຄອງ ແລະ ກວດກາ

ໝວດທີ 1 ການຄຸ້ມຄອງວຽກງານການຮ່ວມມືທາງອາຍາລະຫວ່າງປະເທດ

ມາດຕາ 42 ອົງການຄຸ້ມຄອງວຽກງານການຮ່ວມມືທາງອາຍາລະຫວ່າງປະເທດ

ມາດຕາ 43 ສິດ ແລະ ໜ້າທີ່ ຂອງ ອົງການໄອຍະການປະຊາຊົນສູງສຸດ

ມາດຕາ 44 ສິດ ແລະ ໜ້າທີ່ ຂອງກະຊວງປ້ອງກັນຄວາມສະຫງົບ

ມາດຕາ 45 ສິດ ແລະ ໜ້າທີ່ ຂອງສານປະຊາຊົນສູງສຸດ

ມາດຕາ 46 ສິດ ແລະ ໜ້າທີ່ ຂອງກະຊວງການຕ່າງປະເທດ

ມາດຕາ 47 ສິດ ແລະ ໜ້າທີ່ ຂອງ ກະຊວງຍຸຕິທໍາ

ມາດຕາ 48 ສິດ ແລະ ໜ້າທີ່ ຂອງອົງການປົກຄອງທ້ອງຖິ່ນ

ໝວດທີ 2 ການກວດກາວຽກງານການຮ່ວມມືທາງອາຍາລະຫວ່າງປະເທດ

ມາດຕາ 49 ອົງການກວດກາ ວຽກງານການຮ່ວມມືທາງອາຍາລະຫວ່າງປະເທດ

ມາດຕາ 50 ເນື້ອໃນການກວດກາ

ມາດຕາ 51 ຮູບການກວດກາ

ພາກທີ VI ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 52 ນະໂຍບາຍຕໍ່ຜູ້ມີຜົນງານ

ມາດຕາ 53 ມາດຕະການຕໍ່ຜູ້ລະເມີດ
ພາກທີVII ບົດບັນຍັດສຸດທ້າຍ
ມາດຕາ 54ການຈັດຕັ້ງປະຕິບັດ
ມາດຕາ 55ຜົນສັກສິດ

ປັບປຸງ19 ກຸມພາ 2020

**ສາທາລະນະລັດປະຊາທິປະໄຕປະຊາຊົນລາວ**
**ສັນຕິພາບເອກະລາດປະຊາທິປະໄຕເອກະພາບວັດທະນະຖາວອນ**

ສະພາແຫ່ງຊາດ ເລກທີ.........../ສພຊ
ນະຄອນຫຼວງວຽງຈັນ, ວັນທີ..................

# ຮ່າງ
# ກົດໝາຍ
# ວ່າດ້ວຍການຮ່ວມມືທາງອາຍາລະຫວ່າງປະເທດ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບ ການຄຸ້ມຄອງ, ຕິດຕາມ ແລະ ກວດກາ ວຽກງານການຮ່ວມມືທາງອາຍາລະຫວ່າງປະເທດເພື່ອເຮັດໃຫ້ວຽກງານດັ່ງກ່າວ ປະຕິບັດໄດ້ຢ່າງຖືກຕ້ອງ ແລະ ສອດຄ່ອງກັບແນວທາງນະໂຍບາຍການຕ່າງປະເທດ ຂອງ ສປປ ລາວ, ສົນທິສັນຍາ ແລະ ສັນຍາສາກົນໃນການຮ່ວມມືຊ່ວຍເຫຼືອທາງອາຍາ ທີ່ ສປປ ລາວ ເປັນພາຄີ ແນໃສ່ປົກປັກຮັກສາຜົນປະໂຫຍດຂອງລັດ ແລະ ພົນລະເມືອງ ປະກອບສ່ວນເຮັດໃຫ້ການຮ່ວມມືສາກົນ ໃນການຕ້ານ, ສະກັດກັ້ນອາຊະຍາກຳ, ການສືບສວນ-ສອບສວນ ແລະ ການຮ້ອງຟ້ອງຄະດີອາຍາ ມີປະສິດທິຜົນ ບົນພື້ນຖານການເຄົາລົບຄວາມເປັນເອກະລາດອຳນາດອະທິປະໄຕຂອງກັນ ແລະ ກັນ, ສະເໝີພາບ ແລະ ຕ່າງຝ່າຍຕ່າງ ມີຜົນປະໂຫຍດ.

**ມາດຕາ 2 ການຮ່ວມມືທາງອາຍາລະຫວ່າງປະເທດ**

ການຮ່ວມມືທາງອາຍາ ລະຫວ່າງປະເທດ ແມ່ນ ການໃຫ້ການຮ່ວມມືຊ່ວຍເຫຼືອເຊິ່ງກັນ ແລະ ກັນລະຫວ່າງ ລັດແຫ່ງ ສປປ ລາວ ກັບ ລັດຕ່າງປະເທດຕາມຂອບເຂດການຮ່ວມມືທາງອາຍາລະຫວ່າງປະເທດທີ່ໄດ້ກຳນົດໄວ້ໃນມາດຕາ 7 ຂອງກົດໝາຍສະບັບນີ້.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ລັດທີ່ຮ້ອງຂໍ** ໝາຍເຖິງ ລັດໃດໜຶ່ງ ທີ່ຮ້ອງຂໍການການຊ່ວຍເຫຼືອຈາກລັດອື່ນ ທາງອາຍາ;
2. **ລັດທີ່ຖືກຮ້ອງຂໍ** ໝາຍເຖິງ ລັດໃດໜຶ່ງ ຊຶ່ງໄດ້ຮັບການຮ້ອງຂໍການການຊ່ວຍເຫຼືອ ທາງອາຍາ ຈາກລັດອື່ນ;
3. **ເຄື່ອງມືທີ່ໃຊ້ການກໍ່ອາຊະຍາກຳ** ໝາຍເຖິງ ວັດຖຸສິ່ງຂອງ ຫຼື ຊັບສິ່ງຂອງ ທີ່ນຳໃຊ້ເຂົ້າໃນການກໍ່ອາຊະຍາກາໃດໜຶ່ງ;

4. **ສົນທິສັນຍາ** ແລະ ສັນຍາສາກົນ ໝາຍເຖິງ ສົນທິສັນຍາ ແລະ ສັນຍາສາກົນ ທີ່ກ່ຽວກັບວຽກງານການຮ່ວມມືທາງອາຍາລະຫວ່າງປະເທດທີ່ ສປປ ລາວ ເປັນພາຄີ;

5. **ພາຄີ**ໝາຍເຖິງ ລັດ, ອົງການຈັດຕັ້ງສາກົນ ຫຼື ພາກພື້ນ, ຕາມກົດໝາຍ ສາກົນ ທີ່ໄດ້ສະໝັກໃຈຮັບປະຕິບັດຂໍ້ຜູກພັນຕາມສົນທິສັນຍາ ແລະ ສັນຍາສາກົນ ດັ່ງກ່າວ ໄດ້ມີຜົນສັກສິດຕໍ່ລັດ ແລະອົງການຈັດຕັ້ງ ເຫຼົ່ານັ້ນ;

6. **ທາງອາຍາ** ໝາຍເຖິງ ເລື່ອງທີ່ກ່ຽວຂ້ອງກັບການກະທຳຜິດທາງອາຍາ ແລະ ການດຳເນີນຄະດີອາຍາ;

7. **ອົງການໃຈກາງປະສານງານ** ໝາຍເຖິງ ອົງການທີ່ມີໜ້າທີ່ເປັນໃຈກາງປະສານງານ ແລະ ຮັບຜິດຊອບວຽກງານການຮ່ວມມືທາງອາຍາລະຫວ່າງປະເທດຕາມກົດໝາຍສະບັບນີ້;

8. **ອົງການດຳເນີນຄະດີອາຍາ**ໝາຍເຖິງ ອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ຫຼື ອົງການຈັດຕັ້ງອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ;

9. **ການຍຶດ ຫຼື ອາຍັດຊັບ** ໝາຍເຖິງ ການຫ້າມໂອນ, ປ່ຽນຮູບ, ຊື້ຂາດ ຫຼື ເຄື່ອນຍ້າຍຊັບ ເປັນການຊົ່ວຄາວ ຫຼື ການນຳເອົາຊັບມາໄວ້ໃນການຄຸ້ມຄອງ ຫຼື ການຄວບຄຸມ ເປັນການຊົ່ວຄາວ ຕາມຄຳສັ່ງຂອງສານ ຫຼື ອົງການອື່ນທີ່ມີສິດອຳນາດ;

+ ການຍຶດຊັບ ໝາຍເຖິງ: ການເອົາຊັບເຄື່ອນທີ່ ທີ່ພົວພັນກັບຄະດີ ມາເປັນຂອງກາງ ຕາມຄຳສັ່ງຂອງສານ (ຂໍ້ທີ 18 ມາດຕາ13 ດຳເນີນຄະດີແພ່ງ)

+ ການອາຍັດຊັບ ໝາຍເຖິງ ການບໍ່ອະນຸຍາດໃຫ້ຊື້, ຂາຍ, ມອບ, ໂອນ, ແລກປ່ຽນ, ຊວດຈຳ, ຄ້ຳປະກັນ, ຕໍ່ເຕີມ, ສ້ອມແປງ, ທຳລາຍ ຫຼື ປ່ຽນແປງ ແລະ ອື່ນໆ ກ່ຽວກັບຊັບເຄື່ອນທີ່ ຫຼື ຊັບຄົງທີ່ ລວມທັງບັນຊີເງິນຝາກຢູ່ທະນາຄານ ທີ່ພົວພັນກັບຄະດີ ຕາມຄຳສັ່ງຂອງສານ.(ຂໍ້ທີ 19 ມາດຕາ13 ດຳເນີນຄະດີແພ່ງ)

10. **ການຮິບຊັບ** ຊຶ່ງລວມທັງການປັບໄໝ ຖ້າມີ ໝາຍເຖິງ ການຕັດສິດ ຕໍ່ຊັບ ຢ່າງຖາວອນ ຕາມຄຳສັ່ງຂອງສານ ຫຼື ອົງການອື່ນທີ່ມີສິດອຳນາດ;

+ **ການຮິບຊັບ** ໝາຍເຖິງ ການເອົາຊັບທັງໝົດ ຫຼື ສ່ວນໃດສ່ວນໜຶ່ງ ທີ່ເປັນກຳມະສິດຂອງຜູ້ກະທຳຜິດ ມາເປັນຂອງລັດ ໂດຍບໍ່ມີການໃຊ້ແທນ ຕາມຄຳສັ່ງຂອງສານ. (ມາດຕາ 33 ອາຍາ)

## ມາດຕາ 4 ຫຼັກການການຮ່ວມມືທາງອາຍາລະຫວ່າງປະເທດ

ການຮ່ວມມືທາງອາຍາລະຫວ່າງປະເທດໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ເຄົາລົບເອກະລາດ, ອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນຂອງກັນ, ບໍ່ແຊກແຊງເຂົ້າວຽກງານພາຍໃນຂອງກັນ;

2. ເຄົາລົບ ແລະ ປະຕິບັດຕາມລັດຖະທຳມູນ, ກົດໝາຍ, ສົນທິສັນຍາ ແລະສັນຍາສາກົນທີ່ ສປປ ລາວ ເປັນພາຄີ;

3. ເຄົາລົບ ກຽດສັກສີ ແລະ ສິດເສລີພາບຂອງບຸກຄົນທີ່ກ່ຽວຂ້ອງ ຕາມຄຳຮ້ອງຂໍການຮ່ວມມືທາງອາຍາລະຫວ່າງປະເທດ.

## ມາດຕາ 5 ຂອບເຂດການນຳໃຊ້ກົດໝາຍ

ກົດໝາຍສະບັບນີ້ ນຳໃຊ້ສຳລັບການຮ່ວມມືທາງອາຍາລະຫວ່າງປະເທດ ທັງໃນທີ່ ສປປ ລາວເປັນພາຄີ ຫຼື ບໍ່ເປັນພາຄີ ຂອງສົນທິສັນຍາສອງຝ່າຍ ຫຼື ຫຼາຍຝ່າຍ.

ກົດໝາຍສະບັບນີ້ ບໍ່ນຳໃຊ້ສຳລັບການສົ່ງຜູ້ຮ້າຍຂາມແດນ, ການໂອນຕົວນັກໂທດ, ການໂອນສຳນວນຄະດີອາຍາ ເວັ້ນເສຍແຕ່ສົນທິສັນຍາ ທີ່ສປປ ລາວ ເປັນພາຄີ ໄດ້ກຳນົດໄວ້ເປັນຢ່າງອື່ນ.

**ມາດຕາ 6 ການຮ່ວມມືສາກົນ**

ລັດ ພົວພັນ ແລະ ການຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານການຮ່ວມມືທາງອາຍາລະຫວ່າງປະເທດ ດ້ວຍການແລກປ່ຽນບົດຮຽນ,ຂໍ້ມູນຂ່າວສານ, ເຕັກໂນໂລຊີ, ການຝຶກອົບຮົມ, ສໍາມະນາ, ການຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານວິຊາການ ແລະ ການຊ່ວຍເຫຼືອ ເພື່ອພັດທະນາວຽກງານການຮ່ວມມືທາງອາຍາລະຫວ່າງປະເທດ.

# ພາກທີ II
# ການຮ່ວມມືທາງອາຍາລະຫວ່າງປະເທດ
## ໝວດທີ 1
## ຂອບເຂດການຮ່ວມມື ແລະ ການປະຕິເສດການຮ່ວມມື

**ມາດຕາ 7 ຂອບເຂດການຮ່ວມມືທາງອາຍາລະຫວ່າງປະເທດ**

ການຮ່ວມມືທາງອາຍາລະຫວ່າງປະເທດ ມີຂອບເຂດ ດັ່ງນີ້:

1. ການເອົາຄໍາໃຫ້ການ;
2. ການສະໜອງຫຼັກຖານ;
3. ການເຂົ້າຮ່ວມຂອງບຸກຄົນໃນລັດທີ່ຮ້ອງຂໍ;
4. ການເຂົ້າຮ່ວມຂອງບຸກຄົນທີ່ປະຕິບັດໂທດ ຫຼື ຖືກກັກຂັງ ຢູ່ ສປປ ລາວ;
5. ບ່ອນຢູ່ ແລະ ເອກະລັກບຸກຄົນ;
6. ການກວດຄົ້ນ ແລະ ການຍຶດຫຼັກຖານ;
7. ການຍຶດ ຫຼື ອາຍັດຊັບ;
8. ການສົ່ງຫຼັກຖານຄືນ;
9. ການຮັບຮູ້ ແລະ ປະຕິບັດຄໍາຕັດສິນຂອງສານໃນຄະດີອາຍາ;
10. ການໃຫ້ການຊ່ວຍເຫຼືອອື່ນ ຊຶ່ງສອດຄ່ອງກັບສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ກົດໝາຍ ຂອງ ສປປ ລາວ.

**ມາດຕາ 8 ການປະຕິເສດການໃຫ້ການຮ່ວມມື**

ສປປ ລາວ ປະຕິເສດການໃຫ້ການຮ່ວມມືທາງອາຍາລະຫວ່າງປະເທດ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ບໍ່ເປັນການກະທໍາຜິດທາງອາຍາຕາມທີ່ໄດ້ກໍານົດໄວ້ໃນປະມວນກົດໝາຍອາຍາ ຫຼື ກົດໝາຍອື່ນ ຂອງ ສປປ ລາວ ແລະ ກົດໝາຍ ຂອງລັດທີ່ຮ້ອງຂໍ;

2. ການຮ້ອງຂໍການຮ່ວມມືນັ້ນ ພົວພັນເຖິງການສືບສວນ-ສອບສວນ, ການຮ້ອງຟ້ອງ ຫຼື ການລົງໂທດບຸກຄົນໃດໜຶ່ງ ຍ້ອນຄວາມຜິດທີ່ມີລັກສະນະທາງການເມືອງ ຫຼື ການກະທໍາຜິດທາງທະຫານ;

3. ການໃຫ້ຄວາມຮ່ວມມືນັ້ນ ອາດສົ່ງຜົນກະທົບ ຕໍ່ອໍານາດອະທິປະໄຕ, ຄວາມໝັ້ນຄົງ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ຜົນປະໂຫຍດລວມຂອງຊາດ ຫຼື ຂັດກັບກົດໝາຍຂອງ ສປປ ລາວ;

4. ມີພື້ນຖານທີ່ພາໃຫ້ເຊື່ອວ່າຄໍາຮ້ອງຂໍນັ້ນ ໄດ້ສ້າງຂຶ້ນ ເພື່ອຈຸດປະສົງຂອງການສືບສວນ-ສອບສວນ, ສັ່ງຟ້ອງ, ລົງໂທດ ຫຼື ກໍ່ຄວາມເສຍຫາຍຢ່າງອື່ນ ສໍາລັບບຸກຄົນໃດໜຶ່ງ ຍ້ອນສາເຫດທາງດ້ານເຊື້ອຊາດ, ສາສະໜາ, ເພດ, ເຜົ່າ, ສັນຊາດ ຫຼື ຄໍາເຫັນທາງດ້ານການເມືອງຂອງບຸກຄົນນັ້ນ;

5. ການຮ້ອງຂໍຄວາມຮ່ວມມືນັ້ນ ພົວພັນເຖິງການສືບສວນ-ສອບສວນ, ການສັ່ງຟ້ອງ ຫຼື ການລົງ ໂທດບຸກຄົນໃດໜຶ່ງ ຊຶ່ງອີງຕາມຄວາມຜິດຂອງບຸກຄົນດັ່ງກ່າວ:

- ໄດ້ຖືກລົງໂທດ ຕາມຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດຂອງ ສປປ ລາວ ຫຼື ໄດ້ຮັບການອະໄພຍະໂທດຈາກອົງການທີ່ມີສິດອຳນາດ ຂອງ ສປປ ລາວ ຫຼື ລັດທີ່ຮ້ອງຂໍນັ້ນ;

- ໄດ້ຜ່ານການປະຕິບັດໂທດ ຕາມກົດໝາຍຂອງລັດທີ່ຮ້ອງຂໍ ຫຼື ຂອງ ສປປ ລາວ ແລ້ວ;

6. ຄຳຮ້ອງຂໍການຮ່ວມມືນັ້ນ ພົວພັນເຖິງການສືບສວນ-ສອບສວນ, ການສັ່ງຟ້ອງ ຫຼື ການລົງໂທດບຸກຄົນໃດໜຶ່ງ ທີ່ກ່ຽວຂ້ອງກັບການກະທຳ ຫຼື ການເມີນເສີຍ ທີ່ເກີດຂຶ້ນໃນດິນແດນຂອງລັດທີ່ຮ້ອງຂໍນັ້ນ ບໍ່ນອນຢູ່ໃນອົງປະກອບການກະທຳຜິດທາງອາຍາ ຕາມກົດໝາຍຂອງ ສປປ ລາວ, ຍົກເວັ້ນໄດ້ມີການກຳນົດໄວ້ເປັນຢ່າງອື່ນ ໃນສົນທິສັນຍາວ່າດ້ວຍ ການຮ່ວມມືທາງອາຍາ ລະຫວ່າງປະເທດ ທີ່ ສປປ ລາວ ເປັນພາຄີ ຫຼື ຫຼັກການຍຸຕິທຳສາກົນ, ກົດໝາຍພາຍໃນຂອງປະເທດທີ່ຮ້ອງຂໍ ແລະ ສປປ ລາວ ອາດອະນຸຍາດໃຫ້ປະຕິບັດ;

7. ລັດທີ່ຮ້ອງຂໍນັ້ນ ບໍ່ໄດ້ຢືນຢັນວ່າ ໃນອະນາຄົດ ຕົນຈະໃຫ້ການຊ່ວຍເຫຼືອຕໍ່ບັນຫາທີ່ຄ້າຍຄືກັນ ຊຶ່ງ ສປປ ລາວອາດສະເໜີເພື່ອຂໍການຮ່ວມມືໃນບັນຫາອາຍາໃດໜຶ່ງ;

8. ລັດທີ່ຮ້ອງຂໍ ບໍ່ໄດ້ຢືນຢັນວ່າ ຈະນຳໃຊ້ຂໍ້ມູນ ຫຼື ການຊ່ວຍເຫຼືອ ທີ່ບົ່ງໄວ້ໃນຄຳຮ້ອງຂໍຂອງຕົນເທົ່ານັ້ນ ແລະ ບໍ່ນຳໃຊ້ເພື່ອຈຸດປະສົງອື່ນ ນອກຈາກບັນຫາອາຍາທີ່ກ່ຽວຂ້ອງ ກັບຄຳຮ້ອງຂໍ;

9. ການໃຫ້ຄວາມຮ່ວມມືນັ້ນ ອາດສ້າງຄວາມເສຍຫາຍຕໍ່ຮູບຄະດີ ຫຼື ຂັ້ນຕອນໃນການດຳເນີນຄະດີອາຍາ ທີ່ກຳລັງດຳເນີນ ຢູ່ ສປປ ລາວ ຫຼື ຂັດກັນກັບກົດໝາຍວ່າດ້ວຍການດຳເນີນຄະດີອາຍາຂອງສປປ ລາວ;

10. ການໃຫ້ການຮ່ວມມືຊ່ວຍເຫຼືອນັ້ນ ອາດສ້າງຄວາມເສຍຫາຍຕໍ່ຄວາມປອດໄພຂອງບຸກຄົນໃດໜຶ່ງ ຊຶ່ງຢູ່ພາຍໃນ ຫຼື ຢູ່ນອກດິນແດນ ຂອງ ສປປ ລາວ;

11. ການໃຫ້ການຮ່ວມມືນັ້ນ ອາດສ້າງພາລະອັນໜັກໜ່ວງໃຫ້ແກ່ ສປປ ລາວ.

## ໝວດທີ 2
## ການຮ້ອງຂໍ ແລະ ການພິຈາລະນາການຮ້ອງຂໍ

### ມາດຕາ 9 ການຍື່ນ ຫຼື ຮັບຄຳຮ້ອງຂໍການຮ່ວມມືທາງອາຍາ ລະຫວ່າງປະເທດ

ການຍື່ນ ຫຼື ຮັບຄຳຮ້ອງຂໍການຮ່ວມມືທາງອາຍາລະຫວ່າງປະເທດຈາກລັດທີ່ຮ້ອງຂໍ ມາຍັງ ສປປ ລາວ ຫຼື ຈາກ ສປປ ລາວ ໄປຍັງລັດທີ່ຖືກຮ້ອງຂໍ ແມ່ນໃຫ້ຍື່ນຕໍ່ອົງການໃຈກາງປະສານງານ ໂດຍຜ່ານທາງການທູດ.

ສຳລັບການຍື່ນ ຫຼື ຮັບຄຳຮ້ອງຂໍການຮ່ວມມືທາງອາຍາລະຫວ່າງປະເທດໃຫ້ປະຕິບັດຕາມກົນໄກທີ່ໄດ້ກຳນົດໄວ້ໃນສົນທິສັນຍາວ່າດ້ວຍການຮ່ວມມືທາງອາຍາລະຫວ່າງປະເທດ ທີ່ ສປປ ລາວ ເປັນພາຄີ.

ສ່ວນການຍື່ນ ຫຼື ຮັບຄຳຮ້ອງຂໍການຮ່ວມມື ຕາມກົນໄກຂອງອົງການຕຳຫຼວດສາກົນ ຫຼື ຕຳຫຼວດອາຊຽນ ໃຫ້ປະຕິບັດຕາມຫຼັກການທີ່ເຄີຍປະຕິບັດຜ່ານມາ.

### ມາດຕາ 10 ຄຳຮ້ອງຂໍ ແລະ ເອກະສານປະກອບ

ຄຳຮ້ອງຂໍ ແລະ ເອກະສານປະກອບ ຂໍການຮ່ວມມືທາງອາຍາລະຫວ່າງປະເທດຕ້ອງເຮັດເປັນລາຍລັກອັກສອນ ແລະ ມີເນື້ອໃນ ດັ່ງນີ້:

1. ຊື່ ຂອງອົງການທີ່ມີສິດອຳນາດ ຂອງລັດທີ່ຮ້ອງຂໍ;

2. ຈຸດປະສົງ ແລະ ເຫດຜົນຂອງການຮ້ອງຂໍ ແລະ ປະເພດ ຫຼື ລັກສະນະຂອງການຊ່ວຍເຫຼືອທີ່ຕ້ອງການ;

3. ປະເດັນການຮ້ອງຂໍ ຫຼື ການຂໍຮ້ອງສະເພາະໃດໜຶ່ງ ແລະ ກໍານົດເວລາໃນການປະຕິບັດຄໍາຮ້ອງຂໍນັ້ນ;

4. ອະທິບາຍກ່ຽວກັບລັກສະນະ ຂອງບັນຫາອາຍາ, ເຫດການ ແລະ ຄໍາຖະແຫຼງ ຫຼື ບົດສະຫຼຸບສັງລວມຄະດີ ທີ່ກ່ຽວຂ້ອງກັບການສະເໜີຂໍການຊ່ວຍເຫຼືອ ຢ່າງໜ້ອຍກ່ຽວກັບສະພາບເນື້ອໃນຄະດີ, ຄວາມຜິດ ແລະ ກົດໝາຍທີ່ກ່ຽວຂ້ອງ ຂອງລັດທີ່ຮ້ອງຂໍ ລວມທັງ ບົດກໍານົດໂທດສູງສຸດ;

5. ກໍານົດເວລາໃນການປະຕິບັດຄໍາຮ້ອງຂໍນັ້ນ;

ຄໍາຮ້ອງຂໍການຮ່ວມມືທາງອາຍາລະຫວ່າງປະເທດ ຕ້ອງປະກອບເອກະສານ ທີ່ກ່ຽວຂ້ອງກັບການຮ້ອງຂໍຢ່າງຄົບຖ້ວນ ເພື່ອຊ່ວຍໃຫ້ການປະຕິບັດຄໍາຮ້ອງໄດ້ສະດວກ, ວ່ອງໄວຂຶ້ນ ເຊັ່ນ ບ່ອນຢູ່ ຂອງຜູ້ທີ່ຕ້ອງການເອົາຄໍາໃຫ້ການ, ປະເດັນຄໍາຖາມ ທີ່ຕ້ອງການໃຫ້ເອົາຄໍາໃຫ້ການ, ບ່ອນເກັບມ້ຽນຂອງກາງ ຫຼື ຫຼັກຖານ.

ຄໍາຮ້ອງຂໍ ແລະ ເອກະສານປະກອບ ແລະ ເອກະສານອື່ນ ຊຶ່ງລັດທີ່ຮ້ອງຂໍໄດ້ສົ່ງມານັ້ນອີງການທີ່ຮ້ອງຂໍຕ້ອງລົງລາຍເຊັນ ແລະປະທັບຕາພ້ອມທັງແປເປັນພາສາລາວ ຫຼື ພາສາອື່ນ ຕາມ ກົດໝາຍ ແລະ ສົນທິສັນຍາໄດ້ກໍານົດໄວ້.

## ມາດຕາ 11 ການພິຈາລະນາຄໍາຮ້ອງຂໍການຮ່ວມມືທາງອາຍາລະຫວ່າງປະເທດ

ຄໍາຮ້ອງຂໍການຮ່ວມມືທາງອາຍາລະຫວ່າງປະເທດຈາກລັດທີ່ຮ້ອງຂໍ ມາຍັງ ສປປ ລາວ ຕ້ອງຖືກແກ້ໄຂໂດຍໄວພາຍໃນກໍານົດເວລາອັນຄວນ, ວິທີການ ຫຼື ປະເດັນ ທີ່ຕ້ອງການໃຫ້ຄວາມຊ່ວຍເຫຼືອ ຊຶ່ງບົ່ງໄວ້ໃນຄໍາຮ້ອງນັ້ນ ໂດຍສອດຄ່ອງກັບຫຼັກການ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ ຂອງ ສປປ ລາວ.

ສປປ ລາວ ຈະແຈ້ງໃຫ້ລັດທີ່ຮ້ອງຂໍ ກ່ຽວກັບຄວາມຄືບໜ້າ ຫຼື ບັນຫາທີ່ພາໃຫ້ການປະຕິບັດຄໍາ ຮ້ອງຂໍຊັກຊ້າ ຫຼື ອາດຂໍໃຫ້ລັດທີ່ຮ້ອງຂໍນັ້ນ ສະໜອງຂໍ້ມູນ ຂ່າວສານເພີ່ມເຕີມໃນກໍລະນີ ທີ່ມີຄວາມຫຍຸ້ງຍາກໃນການປະຕິບັດຄໍາຮ້ອງຂໍດັ່ງກ່າວ.

## ມາດຕາ 12 ການຂໍຂໍ້ມູນເພີ່ມເຕີມ

ການຂໍຂໍ້ມູນເພີ່ມເຕີມຂອງລັດຮ້ອງຂໍການຮ່ວມມືທາງອາຍາລະຫວ່າງປະເທດໃຫ້ປະຕິບັດຕາມຂັ້ນຕອນທີ່ໄດ້ກໍານົດໄວ້ໃນ ມາດຕາ 9 ແລະ ມາດຕາ 10 ຂອງກົດໝາຍສະບັບນີ້.

## ມາດຕາ 13 ກໍານົດເວລາ

ລັດທີ່ຖືກຮ້ອງຂໍຈະແຈ້ງຄືນຕໍ່ ລັດທີ່ຮ້ອງຂໍກ່ຽວກັບ ວັນ, ເວລາ ແລະ ສະຖານທີ່ບ່ອນປະຕິບັດການຮ້ອງຂໍຊາບກ່ຽວກັບການຮ້ອງຂໍການຮ່ວມມືທາງອາຍາລະຫວ່າງປະເທດ ຕາມສົນທິສັນຍາທີ່ ສປປ ລາວ ເປັນພາຄີ ຫຼື ຕາມກົດໝາຍ ສປປ ລາວ ໄດ້ກໍານົດໄວ້.

## ມາດຕາ 14 ການຮັກສາຄວາມລັບຂອງຂໍ້ມູນ

ບັນດາຂໍ້ມູນທີ່ບົ່ງໄວ້ໃນຄໍາຮ້ອງຂໍ ການຮ່ວມມືທາງອາຍາລະຫວ່າງປະເທດຈາກລັດທີ່ຮ້ອງຂໍມາຍັງ ສປປ ລາວ ຕ້ອງຖືກຮັກສາໄວ້ເປັນຄວາມລັບ, ບໍ່ເປີດເຜີຍທົ່ວໄປ ໃຫ້ສາທາລະນະຮູ້ ເພື່ອຜົນປະໂຫຍດຂອງຮູບຄະດີ ແລະ ບໍ່ຖືກເປີດເຜີຍ ຫຼື ຖືກນໍາສົ່ງຂໍ້ມູນນັ້ນ ໄປຍັງລັດທີສາມ, ເວັ້ນເສັຍແຕ່ມີຂໍ້ກໍານົດຂອງກົດໝາຍ ຫຼື ສົນທິສັນຍາສາກົນ ໄດ້ກໍານົດໄວ້ຕ່າງຫາກ ທີ່ອາດເປີດເຜີຍຂໍ້ມູນໄດ້ ໃນກໍລະນີທີ່ມີຄວາມຈໍາເປັນ ເພື່ອປະຕິບັດຄໍາຮ້ອງຂໍດັ່ງກ່າວ.

ບັນດາຂໍ້ມູນທີ່ໄດ້ມາຈາກການຊ່ວຍເຫຼືອ ຕາມຄໍາຮ້ອງຂໍການຮ່ວມມືທາງອາຍາລະຫວ່າງປະເທດ ລັດທີ່ຮ້ອງຂໍຕ້ອງນໍາໃຊ້ມາດຕະການຕ່າງໆ ທີ່ຈໍາເປັນ ຫຼື ຕາມກົດໝາຍພາຍໃນຂອງຕົນ ເພື່ອບໍ່ເຮັດໃຫ້ຂໍ້ມູນຖືກນໍາໃຊ້ ຫຼື ເປີດເຜີຍ

ຫຼື ໂອນມອບໃຫ້ບຸກຄົນອື່ນ ຫຼື ຖືກສວຍໃຊ້ ໂດຍບໍ່ໄດ້ຮັບອະນຸຍາດ ນອກເໜືອຈາກທີ່ໄດ້ສະເໜີໄວ້ໃນຄຳຮ້ອງດັ່ງກ່າວ ຍົກເວັ້ນ ສປປ ລາວ ໄດ້ມີການເຫັນດີເປັນລາຍລັກອັກສອນ.

## ໝວດທີ 3
## ການດຳເນີນການຮ່ວມມືທາງອາຍາລະຫວ່າງປະເທດ

### ມາດຕາ 15 ການເອົາຄຳໃຫ້ການ

ໃນການປະຕິບັດຄຳຮ້ອງຂໍ ການຮ່ວມມືທາງອາຍາລະຫວ່າງປະເທດ ເພື່ອໃຫ້ການເອົາຄຳໃຫ້ການຂອງບຸກຄົນໜຶ່ງທີ່ຢູ່ ສປປ ລາວ ເພື່ອຈຸດປະສົງນຳໃຊ້ໃນການດຳເນີນຄະດີອາຍາ ຢູ່ໃນລັດທີ່ຮ້ອງຂໍ, ອົງການທີ່ມີສິດອຳນາດ ໃນການດຳເນີນຄະດີອາຍາ ຕ້ອງພະຍາຍາມເອົາຄຳໃຫ້ການດ້ວຍຄວາມສະໝັກໃຈຂອງບຸກຄົນດັ່ງກ່າວ.

### ມາດຕາ 16 ການເອົາຫຼັກຖານ

ໃນການປະຕິບັດຄຳຮ້ອງຂໍ ການຮ່ວມມືທາງອາຍາລະຫວ່າງປະເທດ ເພື່ອໃຫ້ເອົາຫຼັກຖານອົງການທີ່ມີສິດໃນການດຳເນີນຄະດີອາຍາ ຕ້ອງຊອກຫາຂໍ້ມູນ ລວມທັງຄຳໃຫ້ການ, ເອກະສານ ຫຼື ບັນທຶກຕ່າງໆ ຕ້ອງປະຕິບັດຕາມຫຼັກການຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ຂອງ ສປປ ລາວ ຊຶ່ງອົງການທີ່ມີສິດໃນການດຳເນີນຄະດີອາຍາ ຕ້ອງອະນຸຍາດໃຫ້ຜູ້ຕາງໜ້າທາງດ້ານກົດໝາຍ ຫຼື ທະນາຍຄວາມຂອງບຸກຄົນທີ່ກ່ຽວຂ້ອງເຂົ້າຮ່ວມນຳ.

### ມາດຕາ 17 ການປະຕິເສດ ສະໜອງຫຼັກຖານ

ບຸກຄົນໃດໜຶ່ງ ທີ່ຖືກຮຽກຮ້ອງໃຫ້ສະໜອງຄຳໃຫ້ການ, ຫຼັກຖານ ຫຼື ເອກະສານຕ່າງໆ ມີສິດປະຕິເສດສະໜອງຂໍ້ມູນຫຼັກຖານຖ້າວ່າກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ຫຼື ກົດໝາຍທີ່ກ່ຽວຂ້ອງ ຂອງ ສປປ ລາວ ຫຼື ກົດໝາຍຂອງລັດທີ່ຮ້ອງຂໍ ຫາກອະນຸຍາດ.

ຖ້າວ່າບຸກຄົນດັ່ງກ່າວ ຫາກໄດ້ປະຕິເສດສະໜອງຂໍ້ມູນ, ຫຼັກຖານ, ຜູ້ກ່ຽວຕ້ອງແຈ້ງເປັນລາຍລັກອັກສອນ ກ່ຽວກັບການປະຕິເສດສະໜອງຂໍ້ມູນຂອງຕົນນັ້ນ

### ມາດຕາ 18 ການເຂົ້າຮ່ວມຂອງບຸກຄົນ ຢູ່ໃນລັດທີ່ຮ້ອງຂໍ

ໃນກໍລະນີທີ່ມີການຮ້ອງຂໍໃຫ້ບຸກຄົນໃດໜຶ່ງ ທີ່ອາໄສຢູ່ໃນດິນແດນຂອງ ສປປ ລາວ ໄປມີໜ້າ ຢູ່ລັດທີ່ຮ້ອງຂໍ ບົນພື້ນຖານການຍິນຍອມຂອງຜູ້ກ່ຽວ ສປປ ລາວ ອາດເຫັນດີໃຫ້ບຸກຄົນດັ່ງກ່າວ ໄປຍັງດິນແດນຂອງລັດທີ່ຮ້ອງຂໍ ເພື່ອ:

- ຊ່ວຍເຫຼືອໃນການສືບສວນ-ສອບສວນ ບັນຫາທີ່ພົວພັນເຖິງຄະດີອາຍາ;
- ປາກົດຕົວ ໃນການດຳເນີນຄະດີ ທີ່ພົວພັນເຖິງຄະດີອາຍາ, ຍົກເວັ້ນບຸກຄົນນັ້ນ ເປັນຜູ້ຖືກຫາ.

ອົງການໃຈກາງປະສານງານ ຕ້ອງໄດ້ແຈ້ງໃຫ້ລັດທີ່ຮ້ອງຂໍຊາບ, ຖ້າບຸກຄົນດັ່ງກ່າວ ຫາກປະຕິເສດ ຫຼື ຍິນຍອມໄປມີໜ້າ ຕາມຄຳຮ້ອງຂໍການຮ່ວມມືທາງອາຍາລະຫວ່າງປະເທດ.

ລັດທີ່ຮ້ອງຂໍ ຕ້ອງຮັບປະກັນຄວາມປອດໄພ ແລະ ຮັບຜິດຊອບ ຄ່າໃຊ້ຈ່າຍ ໃນການເດີນທາງໄປ-ກັບ, ອັດຕາກິນ, ຄ່າພັກເຊົາ ລວມທັງເບັ້ຍລ້ຽງອື່ນ ເພື່ອອຳນວຍຄວາມສະດວກຕ່າງໆ ໃຫ້ແກ່ບຸກຄົນດັ່ງກ່າວ.

**ມາດຕາ 19 ການບໍ່ຖືເປັນຫຼັກຖານ**

ຂໍ້ມູນ ທີ່ໄດ້ມາດ້ວຍວິທີການທີ່ບໍ່ຖືກຕ້ອງຕາມກົດໝາຍ ຈະບໍ່ຖືເປັນຫຼັກຖານ.

ຂໍ້ມູນ ທີ່ບໍ່ຖືເປັນຫຼັກຖານໄດ້ນັ້ນ ຈະບໍ່ມີຜົນທາງດ້ານກົດໝາຍ ແລະ ບໍ່ສາມາດໃຊ້ເປັນພື້ນຖານໃນການດຳເນີນຄະດີ.

**ມາດຕາ 20 ການເຂົ້າຮ່ວມຂອງບຸກຄົນທີ່ຖືກປະຕິບັດໂທດ ຫຼື ຖືກກັກຂັງ ຢູ່ ສປປ ລາວ**

ສປປ ລາວ ອາດພິຈາລະນາໃຫ້ບຸກຄົນທີ່ຖືກປະຕິບັດໂທດ ຫຼື ຖືກກັກຂັງ ຢູ່ໃນດິນແດນ ຂອງ ສປປ ລາວ ຖືກໂອນຕົວເປັນການຊົ່ວຄາວບົນພື້ນຖານ:

- ການຍິນຍອມຂອງຜູ້ກ່ຽວ ເພື່ອໄປໃຫ້ການ ຫຼື ຊ່ວຍເຫຼືອໃນການສືບສວນ-ສອບສວນດຳເນີນຄະດີອາຍາ ຢູ່ລັດທີ່ຮ້ອງຂໍ;

- ລັດທີ່ຮ້ອງຂໍ ຈະບໍ່ຮຽກຮ້ອງໃຫ້ ສປປ ລາວ ດຳເນີນການສົ່ງຜູ້ຮ້າຍຂ້າມແດນ ຕໍ່ຕົວຜູ້ກ່ຽວ.

ລັດທີ່ຮ້ອງຂໍ ຕ້ອງສືບຕໍ່ກັກຕົວຜູ້ກ່ຽວ ຕາມກົດໝາຍທີ່ກ່ຽວຂ້ອງຂອງລັດທີ່ຮ້ອງຂໍ ແລະ ຕ້ອງສົ່ງບຸກຄົນດັ່ງກ່າວຄືນ ມາຍັງ ສປປ ລາວ ໂດຍໄວ ພາຍຫຼັງທີ່ໄດ້ສິ້ນສຸດເລື່ອງອາຍາຊຶ່ງພົວພັນເຖິງການໂອນຕົວຜູ້ກ່ຽວຊົ່ວຄາວ.

ໄລຍະເວລາໃນການກັກຂັງ ຢູ່ໃນລັດທີ່ຮ້ອງຂໍນັ້ນໃຫ້ນັບລວມໄລຍະເວລາປະຕິບັດໂທດຕັດອິດສະລະພາບ ຫຼື ການກັກຂັງຢູ່ ສປປ ລາວ.

ລັດທີ່ຮ້ອງຂໍ ຕ້ອງຮັບປະກັນວ່າ ຈະຮັບຜິດຊອບຄ່າໃຊ້ຈ່າຍຕ່າງໆ ແລະ ການຮັກສາຄວາມປອດໄພ ທີ່ພົວພັນກັບການໂອນຕົວບຸກຄົນທີ່ຖືກປະຕິບັດໂທດ ຫຼື ຖືກກັກຂັງ ແລະ ການໃຫ້ການຮ່ວມມືທາງອາຍາລະຫວ່າງປະເທດ ຢູ່ໃນລັດທີ່ຮ້ອງຂໍ.

**ມາດຕາ 21 ມາດຕະການຄວາມປອດໄພ**

ໃນກໍລະນີທີ່ບຸກຄົນໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18ແລະ 20ຂອງກົດໝາຍສະບັບນີ້ ໄປປາກົດຕົວຢູ່ລັດທີ່ຮ້ອງຂໍ ຕາມຄຳຮ້ອງຂໍການຮ່ວມມື, ລັດທີ່ຮ້ອງຂໍ ຕ້ອງຮັບປະກັນມາດຕະການຄວາມປອດໄພ ແລະ ໄດ້ຮັບການປົກປ້ອງ ດັ່ງນີ້:

- ບຸກຄົນດັ່ງກ່າວ ຈະບໍ່ຖືກກັກຂັງ, ເວັ້ນເສຍແຕ່ບຸກຄົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 20 ຂອງກົດໝາຍສະບັບນີ້ ຫາກຖືກຮ້ອງຟ້ອງດຳເນີນຄະດີ, ຖືກລົງໂທດ ຫຼື ຖືກຈຳກັດສິດເສລີພາບສ່ວນບຸກຄົນໃນຮູບແບບອື່ນ ອັນເນື່ອງມາຈາກການກະທຳ ຫຼື ການເມີນເສີຍ ທີ່ຖືວ່າເປັນການກະທຳຜິດຕາມກົດໝາຍ ຂອງລັດທີ່ຮ້ອງຂໍ ກ່ອນທີ່ຜູ້ກ່ຽວຈະເດີນທາງໄປຍັງລັດທີ່ຮ້ອງຂໍ;

- ບຸກຄົນດັ່ງກ່າວ ຈະບໍ່ຖືກບັງຄັບ, ນາບຂູ່ ຫຼື ນຳໃຊ້ວິທີການອື່ນ ໃຫ້ສະໜອງຫຼັກຖານ ຫຼື ໃຫ້ການກ່ຽວກັບບັນຫາອື່ນ ນອກຈາກຕາມທີ່ໄດ້ບົ່ງໄວ້ໃນຄຳຮ້ອງຂໍການການຮ່ວມມືທາງອາຍາລະຫວ່າງປະເທດ, ເວັ້ນເສຍແຕ່ຜູ້ກ່ຽວຍິນຍອມດ້ວຍຄວາມສະໝັກໃຈ;

- ບຸກຄົນດັ່ງກ່າວ ຊຶ່ງໄດ້ປາກົດຕົວຢູ່ຕໍ່ໜ້າສານ ຫຼື ອົງການທີ່ມີສິດອຳນາດໃນການດຳເນີນຄະດີອາຍາ ຢູ່ລັດທີ່ຮ້ອງຂໍ ຈະບໍ່ຖືກດຳເນີນຄະດີອາຍາ ບົນພື້ນຖານຄຳໃຫ້ການຂອງຕົນ, ເວັ້ນເສຍແຕ່ຜູ້ກ່ຽວ ຫາກບໍ່ເຄົາລົບສານ ຫຼື ໃຫ້ການເທັດ;

- ບຸກຄົນດັ່ງກ່າວ ຈະບໍ່ຖືກຮ້ອງຟ້ອງດຳເນີນຄະດີແພ່ງ ຍ້ອນການກະທຳ ຫຼື ການເມີນເສີຍ ຂອງຜູ້ກ່ຽວ ກ່ອນການອອກເດີນທາງໄປຍັງລັດທີ່ຮ້ອງຂໍ.

**ມາດຕາ 22 ບ່ອນຢູ່ ຫຼື ເອກະລັກບຸກຄົນ**

ອົງການທີ່ມີສິດອຳນາດໃນການດຳເນີນຄະດີອາຍາ ຂອງ ສປປ ລາວ ຈະພະຍາຍາມປະຕິບັດ ຄຳຮ້ອງຂໍການຮ່ວມມືທາງອາຍາ ເພື່ອຊອກຮູ້ບ່ອນຢູ່ ຫຼື ຕຳນິຮູບປະພັນຂອງບຸກຄົນໃດໜຶ່ງ ທີ່ບົ່ງໄວ້ໃນຄຳຮ້ອງຂໍ ພາຍໃຕ້ກົດໝາຍທີ່ກ່ຽວຂ້ອງ ຂອງ ສປປ ລາວ.

**ມາດຕາ 23 ການກວດຄົ້ນ ແລະ ການຍຶດຫຼັກຖານ**

ໃນກໍລະນີຄຳຮ້ອງຂໍການຮ່ວມມືທາງອາຍາ ລະຫວ່າງປະເທດ ທີ່ຮ້ອງຂໍໃຫ້ກວດຄົ້ນ, ຍຶດ ແລະ ສົ່ງມອບຫຼັກຖານ ເຊັ່ນ ເອກະສານ, ບັນທຶກຂໍ້ມູນ ແລະ ຫຼັກຖານອື່ນ ໃຫ້ລັດທີ່ຮ້ອງຂໍ, ອົງການທີ່ມີສິດອຳນາດໃນການດຳເນີນຄະດີອາຍາ ຂອງ ສປປ ລາວ ຕ້ອງປະຕິບັດຄຳຮ້ອງດັ່ງກ່າວ ໂດຍມີເງື່ອນໄຂ ວ່າ:

- ຄຳຮ້ອງຂໍນັ້ນ ຕ້ອງກຳນົດລະອຽດຂໍ້ມູນ ຂ່າວສານ ທີ່ຈຳເປັນທັງໝົດ ກ່ຽວກັບຫຼັກຖານນັ້ນ;
-ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ກົດໝາຍອື່ນ ທີ່ກ່ຽວຂ້ອງ ຂອງ ສປປ ລາວ ອະນຸຍາດໃຫ້ດຳເນີນການໄດ້.

ອົງການໃຈກາງປະສານງານ ປະສານສົມທົບກັບ ກະຊວງການຕ່າງປະເທດໃນການແຈ້ງໃຫ້ລັດທີ່ຮ້ອງຂໍຊາບ ກ່ຽວກັບຜົນການກວດຄົ້ນ ແລະ ຍຶດ ເອກະສານ ຫຼື ບັນທຶກຂໍ້ມູນຕ່າງໆ ແລະ ວັດຖຸ ຕາມຄຳຮ້ອງຂໍ ພ້ອມທັງປຶກສາຫາລືວິທີການ ແລະ ວັນເວລາໃນການສົ່ງຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 25 ຂອງກົດໝາຍສະບັບນີ້.

**ມາດຕາ 24 ການ ຍຶດ ຫຼື ອາຍັດ ຊັບ**

ຄຳຮ້ອງຂໍການຮ່ວມມືທາງອາຍາລະຫວ່າງປະເທດ ທີ່ຮ້ອງຂໍໃຫ້ຍຶດ ຫຼື ອາຍັດຊັບທີ່ຢູ່ ສປປ ລາວ ອົງການດຳເນີນຄະດີອາຍາ ຂອງ ສປປ ລາວ ຕ້ອງປະຕິບັດຄຳຮ້ອງດັ່ງກ່າວ ໂດຍມີເງື່ອນໄຂ ດັ່ງນີ້:

- ຄຳຮ້ອງຂໍນັ້ນ ຕ້ອງມີຄຳສັ່ງສະບັບຕົ້ນ ຈາກອົງການດຳເນີນຄະດີອາຍາຄັດຕິດພ້ອມທັງຂໍ້ກຳນົດ, ບົດບັນຍັດທາງດ້ານກົດໝາຍທີ່ອະນຸຍາດ ໃຫ້ລັດທີ່ຮ້ອງຂໍສາມາດດຳເນີນການດັ່ງກ່າວໄດ້;
- ກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ແລະ ກົດໝາຍອື່ນ ທີ່ກ່ຽວຂ້ອງ ຂອງ ສປປ ລາວ ອະນຸຍາດໃຫ້ດຳເນີນການໄດ້;
- ວັດຖຸສິ່ງຂອງຍຶດ ຫຼື ອາຍັດ ຊັບຕາມຄຳຮ້ອງຂໍນັ້ນ ບໍ່ພົວພັນກັບການດຳເນີນຄະດີ ຢູ່ ສປປ ລາວ;

ອົງການໃຈກາງປະສານງານ ຕ້ອງໄດ້ແຈ້ງໃຫ້ລັດທີ່ຮ້ອງຂໍຊາບ ກ່ຽວກັບຜົນການຍຶດ ຫຼື ອາຍັດ ຊັບຕາມຄຳຮ້ອງຂໍ.

ສຳລັບ ການຄຸ້ມຄອງ ແລະ ປົກປັກຮັກສາ ຊັບ ທີ່ໄດ້ຍຶດ ແລະ ອາຍັດໄວ້ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ຂອງ ສປປ ລາວ.

**ມາດຕາ 25 ການສົ່ງຫຼັກຖານຄືນ**

ລັດທີ່ຮ້ອງຂໍ ຕ້ອງສົ່ງເອກະສານ, ບັນທຶກຂໍ້ມູນ ຫຼື ວັດຖຸສິ່ງຂອງ ທີ່ໄດ້ໄປແລ້ວນັ້ນ ຕາມຄຳຮ້ອງຂໍຂອງຕົນທີ່ພົວພັນກັບການຂໍການຊ່ວຍເຫຼືອຄືນໃຫ້ ລັດທີ່ຖືກຮ້ອງຂໍ ໃນເວລາສິ້ນສຸດເລື່ອງທາງອາຍາ.

ໃນກໍລະນີທີ່ມີຄວາມຈຳເປັນໃນເລື່ອງທາງອາຍາໃດໜຶ່ງ ຢູ່ ສປປ ລາວ ເມື່ອມີການຮ້ອງຂໍຈາກ ສປປ ລາວລັດທີ່ຖືກຮ້ອງຂໍ ຕ້ອງສົ່ງເອກະສານ, ບັນທຶກຂໍ້ມູນ ຫຼື ວັດຖຸສິ່ງຂອງຄືນໃຫ້ ສປປ ລາວ ເປັນການຊົ່ວຄາວ.

### ມາດຕາ 26 ການຢັ້ງຢືນ ແລະ ການກວດກາຄວາມຖືກຕ້ອງຂອງເອກະສານ

ບົນພື້ນຖານການສະເໜີຂອງອົງການໃຈກາງປະສານງານ ຂອງ ສປປ ລາວ, ເອກະສານທີ່ຈຳເປັນ ຊຶ່ງແນບມານຳຄຳຮ້ອງຂໍການຮ່ວມມືທາງອາຍາລະຫວ່າງປະເທດນັ້ນ ຕ້ອງມີການຢັ້ງຢືນຄວາມຖືກຕ້ອງຂອງເອກະສານ ຈາກລັດທີ່ຮ້ອງຂໍ.

ເອກະສານໃດໜຶ່ງ ຈະຖືວ່າໄດ້ຮັບການກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງແລ້ວ ກໍຕໍ່ເມື່ອໄດ້ ຮັບການລົງນາມ ແລະ / ຫຼື ປະທັບຕາທາງການຂອງສານ ຫຼື ຂອງເຈົ້າໜ້າທີ່ທີ່ມີສິດຕາມກົດໝາຍກ່ຽວຂ້ອງ ຂອງລັດທີ່ຮ້ອງຂໍ.

ເອກະສານທີ່ສົ່ງໃຫ້ກັນທາງເອເລັກໂຕຣນິກ ແລະ ຢູ່ໃນຮູບເອເລັກໂຕຣນິກ ເຊັ່ນ ຮູບຖ່າຍ, ລາຍນິ້ວມື, ຮູບຖ່າຍເພື່ອພິສູດຕຳນິຮູບປະພັນຂອງບຸກຄົນ, ສຳເນົາເອກະສານ ມີຜົນສັກສິດໃຊ້ໄດ້ເຊັ່ນດຽວກັນ ກັບເອກະສານທີ່ສົ່ງທາງໄປສະນີ ຫຼື ດ້ວຍມື ຖ້າຫາກວ່າ ໄດ້ສົ່ງໃຫ້ບຸກຄົນ ຫຼື ອົງການທີ່ມີສິດອຳນາດຢັ້ງຢືນຈາກລັດທີ່ຮ້ອງຂໍແຕ່ເອກະສານສະບັບຕົ້ນ ຕ້ອງສົ່ງໃຫ້ລັດທີ່ຖືກຮ້ອງຂໍຢ່າງເປັນທາງການ.

### ມາດຕາ 27 ການຕິດຕໍ່ສື່ສານດ້ວຍວີດີໂອ ຫຼື ສຽງຜ່ານດາວທຽມ ຫຼື ອິນເຕີເນັດ

ເພື່ອອຳນວຍຄວາມສະດວກໃຫ້ແກ່ການປະຕິບັດຄຳຮ້ອງຂໍການຮ່ວມມືທາງອາຍາລະຫວ່າງປະເທດອາດມີການຕິດຕໍ່ສື່ສານ ທາງເອເລັກໂຕຣນິກ ຫຼື ຮູບການທັນສະໄໝອື່ນ ຕາມການສະເໜີຂອງລັດທີ່ຮ້ອງຂໍ ແລະຕາມເງື່ອນໄຂທີ່ສາມາດປະຕິບັດໄດ້ ຂອງອົງການທີ່ມີສິດໃນການດຳເນີນຄະດີອາຍາ ຕາມກົດໝາຍ ແລະລະບຽບການ.

### ມາດຕາ 28 ຄ່າໃຊ້ຈ່າຍໃນການປະຕິບັດຄຳຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ

ສປປ ລາວ ຈະຮັບຜິດຊອບຄ່າໃຊ້ຈ່າຍໃນການປະຕິບັດຄຳຮ້ອງຂໍການຮ່ວມມືທາງອາຍາລະຫວ່າງປະເທດ ຢູ່ດິນແດນ ຂອງ ສປປ ລາວ, ຍົກເວັ້ນ ຄ່າໃຊ້ຈ່າຍດັ່ງຕໍ່ໄປນີ້ ຊຶ່ງລັດທີ່ຮ້ອງຂໍ ຕ້ອງຮັບພາລະ ຄື:

- ຄ່າທຳນຽມ ຂອງການໃຫ້ຄຳປຶກສາ, ຄ່າວ່າຄວາມຂອງທະນາຍຄວາມ, ຄ່າປ່ອຍການຂອງບຸກຄົນ ທີ່ຕ້ອງການໃຫ້ເອົາຫຼັກຖານ ຫຼື ຊ່ຽວຊານ ຕາມຄຳຮ້ອງຂໍການຮ່ວມມືທາງອາຍາລະຫວ່າງປະເທດ;
- ຄ່າແປພາສາ, ຄ່າທຳນຽມການຢັ້ງຢືນເອກະສານ, ຄ່າສຳເນົາເອກະສານ ແລະ ຂໍ້ມູນ ;
- ຄ່າໃຊ້ຈ່າຍ ທີ່ພົວພັນກັບການສົ່ງບຸກຄົນໄປຍັງດິນແດນ ຂອງລັດທີ່ຮ້ອງຂໍ ແລະ ກັບຄືນ ສປປ ລາວ ລວມທັງຄ່າໃຊ້ຈ່າຍໃນການເດີນທາງໄປ-ມາ, ຄ່າທຳນຽມ, ເບັ້ຍລ້ຽງ ຫຼື ຄ່າປ່ອຍການ ແລະ ອື່ນໆ ຕາມການຮ້ອງຂໍຂອງຜູ້ກ່ຽວ;
- ຄ່າໃຊ້ຈ່າຍທີ່ພົວພັນເຖິງການນຳສົ່ງເຈົ້າໜ້າທີ່ຄວບຄຸມກັກຂັງ ຫຼື ຕິດຕາມ;
- ຄ່າໃຊ້ຈ່າຍ ທີ່ພົວພັນເຖິງການຕິດຕໍ່ສື່ສານທາງເອເລັກໂຕຣນິກ;

ໃນກໍລະນີທີ່ສົນທິສັນຍາວ່າດ້ວຍ ການຊ່ວຍເຫຼືອລະຫວ່າງປະເທດທາງອາຍາທີ່ ສປປ ລາວ ເປັນພາຄີຫາກໄດ້ກຳນົດ ກ່ຽວກັບຄ່າໃຊ້ຈ່າຍໃນການດຳເນີນການຊ່ວຍເຫຼືອທາງອາຍາ ກໍໃຫ້ປະຕິບັດຕາມສົນທິສັນຍານັ້ນ.

ໃນກໍລະນີທີ່ມີຄ່າໃຊ້ຈ່າຍຫຼວງຫຼາຍ ເພື່ອປະຕິບັດຄຳຮ້ອງຂໍການຮ່ວມມືທາງອາຍາລະຫວ່າງປະເທດ, ສປປ ລາວ ແລະ ລັດທີ່ຮ້ອງຂໍ ຕ້ອງປຶກສາຫາລືກັນເພີ່ມເຕີມສຳລັບການສືບຕໍ່ ຫຼື ບໍ່ສືບຕໍ່ປະຕິບັດຄຳຮ້ອງຂໍດັ່ງກ່າວ.

### ມາດຕາ 29 ການແຈ້ງຜົນການດຳເນີນການ

ລັດທີ່ຮ້ອງຂໍ ຕ້ອງແຈ້ງໃຫ້ ລັດທີ່ຖືກຮ້ອງຂໍ ຊາບໂດຍໄວ ກ່ຽວກັບການດຳເນີນຄະດີ ຫຼື ຂໍການຊ່ວຍເຫຼືອຂອງບຸກຄົນທີ່ຕ້ອງການ ຫຼື ການນຳໃຊ້ຂໍ້ມູນ, ຫຼັກຖານ ກ່ຽວກັບການຍຶດ ແລະ ອາຍັດ ຊັບ ເພື່ອປະຕິບັດຄຳຮ້ອງຂໍການຮ່ວມມືທາງອາຍາ ຢູ່ດິນແດນຂອງລັດທີ່ຮ້ອງຂໍ.

# ໝວດທີ 4
# ການປະຕິບັດຄຳຕັດສິນຄະດີອາຍາຂອງຕ່າງປະເທດ

**ມາດຕາ 30 ການປະຕິບັດຄຳຕັດສິນຄະດີອາຍາຂອງຕ່າງປະເທດ**

ການປະຕິບັດຄຳຕັດສິນຄະດີອາຍາຂອງຕ່າງປະເທດ ເມື່ອໄດ້ຮັບຄຳຮ້ອງຂໍການຮ່ວມມືທາງອາຍາກ່ຽວກັບການປະຕິບັດຄຳຕັດສິນຄະດີອາຍາຂອງສານຂອງລັດທີ່ຮ້ອງຂໍ ເພື່ອຮິບຊັບທີ່ໄດ້ມາຈາກການກະທຳຜິດ ແລະ/ຫຼື ວັດຖຸທີ່ນຳໃຊ້ເຂົ້າໃນການກະທຳຜິດຢູ່ ສປປ ລາວ ຕາມຄຳຕົກລົງຂອງສານ ຫຼື ອົງການທີ່ມີສິດອຳນາດຂອງລັດທີ່ຮ້ອງຂໍ ອົງການໃຈກາງປະສານງານ ຕ້ອງສະເໜີໃຫ້ສານປະຊາຊົນສູງສຸດ ພິຈາລະນາມອບໃຫ້ສານປະຊາຊົນແຂວງ, ນະຄອນຫຼວງ ບ່ອນທີ່ຊັບທີ່ໄດ້ຮ້ອງຂໍ ຕັ້ງຢູ່ ພິຈາລະນາຕັດສິນຮັບຮູ້ ແລະ ປະຕິບັດຄຳຕັດສິນຂອງສານຂອງລັດທີ່ຮ້ອງຂໍ ຕາມກົດໝາຍ.

ໃນກໍລະນີ ຍັງບໍ່ທັນໄດ້ອອກຄຳສັ່ງຢຶດ ຫຼື ອາຍັດຊັບ ຕ້ອງອອກຄຳສັ່ງຢຶດ ຫຼື ອາຍັດຊັບດັ່ງກ່າວ ກ່ອນທີ່ ອົງການໄອຍະການປະຊາຊົນທີ່ກ່ຽວຂ້ອງ ຈະສະເໜີໃຫ້ ສານ ພິຈາລະນາ.

**ມາດຕາ 31 ການພິຈາລະນາ ກ່ຽວກັບ ການປະຕິບັດຄຳຕັດສິນຄະດີອາຍາຂອງຕ່າງປະເທດ**

ພາຍຫຼັງ ໄດ້ຮັບການມອບໝາຍຈາກອົງການໄອຍະການປະຊາຊົນສູງສຸດແລ້ວ ອົງການໄອຍະການປະຊາຊົນທີ່ກ່ຽວຂ້ອງຕ້ອງຄົ້ນຄວ້າຄຳຮ້ອງຂໍດັ່ງກ່າວ ພ້ອມທັງເກັບໂຮມຫຼັກຖານທີ່ຈຳເປັນ ແລ້ວສະເໜີ ໃຫ້ສານປະຊາຊົນຂັ້ນຂອງຕົນ ພິຈາລະນາຕັດສິນ ພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳສະເໜີເປັນຕົ້ນໄປ.

ການພິຈາລະນາກ່ຽວກັບການປະຕິບັດຄຳຕັດສິນຂອງສານຕ່າງປະເທດ ໃນທີ່ປະຊຸມສານ ໃຫ້ມີແຕ່ຄະນະສານ, ຫົວໜ້າອົງການໄອຍະການປະຊາຊົນ, ອົງການສືບສວນ-ສອບສວນ, ກະຊວງການຕ່າງປະເທດ, ກະຊວງຍຸຕິທຳ, ຜູ້ຕາງໜ້າສະຖານເອກອັກຄະລັດຖະທູດ ຫຼື ສະຖານກົງສຸນຂອງລັດທີ່ຮ້ອງຂໍ ແລະ ເຈົ້າໜ້າທີ່ຂອງອົງການອື່ນທີ່ມີສິດອຳນາດ ຂອງ ສປປ ລາວ ເທົ່ານັ້ນ.

**ມາດຕາ 32 ສິດຂອງສານ ໃນການພິຈາລະນາ ກ່ຽວກັບ ການປະຕິບັດຄຳຕັດສິນຄະດີອາຍາຂອງຕ່າງປະເທດ**

ໃນການພິຈາລະນາກ່ຽວກັບການປະຕິບັດຄຳຕັດສິນຂອງສານຕ່າງປະເທດ ສານ ມີ ສິດ ດັ່ງນີ້:

1. ກວດກາການກະທຳຜິດ ທີ່ບົ່ງໄວ້ໃນຄຳຮ້ອງຂໍນັ້ນ ເປັນການກະທຳຜິດ ທີ່ໄດ້ກຳນົດໄວ້ກົດໝາຍຂອງ ສປປ ລາວ ຫຼື ບໍ່;

3. ກວດກາການກະທຳຜິດ ບໍ່ຕົກຢູ່ໃນເງື່ອນໄຂຂອງການປະຕິເສດການການຮ້ອງຂໍການຮ່ວມມື ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ແລະຫຼັກການທີ່ໄດ້ກຳນົດໄວ້ໃນມາດຕາ 4 ຂອງກົດໝາຍສະບັບນີ້ ຫຼື ບໍ່.

ໃນກໍລະນີທີ່ ສານ ຫາກເຫັນວ່າ ມີເຫດຜົນແລ້ວ ສານກໍຈະຕັດສິນຮັບຮູ້ ແລະ ໃຫ້ປະຕິບັດຄຳຕັດສິນດັ່ງກ່າວ ຕາມການຮ້ອງຂໍ ແລະ ໃຫ້ດຳເນີນການມອບຊັບໃຫ້ລັດທີ່ຮ້ອງຂໍ ພາຍໃນກໍານົດເວລາ ສາມສິບວັນ ນັບແຕ່ວັນໄດ້ອ່ານຄຳຕັດສິນເປັນຕົ້ນໄປ.

ໃນກໍລະນີທີ່ ສານ ຫາກເຫັນວ່າ ບໍ່ມີເຫດຜົນໃນການປະຕິບັດຄຳຕັດສິນນັ້ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ຫຼື ກົດໝາຍສະບັບອື່ນ ສານ ກໍຈະຕັດສິນ ບໍ່ໃຫ້ປະຕິບັດຄຳຮ້ອງຂໍດັ່ງກ່າວ.

ສານ ເປັນອົງການທີ່ມີສິດອຳນາດ ໃນການຕົກລົງ ກ່ຽວກັບການປະຕິບັດຄຳຕັດສິນຄະດີອາຍາຂອງສານຕ່າງປະເທດ.

ຄຳຕົກລົງຂອງສານປະຊາຊົນທີ່ກ່ຽວຂ້ອງ ເປັນຄຳຕົກລົງຂັ້ນສຸດທ້າຍ ໂດຍບໍ່ສາມາດອຸທອນ ຫຼື ຄັດຄ້ານໄດ້.

**ມາດຕາ 33 ການລົບລ້າງຄຳສັ່ງຍຶດ ຫຼື ອາຍັດຊັບ**

ເມື່ອ ສານ ບໍ່ພິຈາລະນາຄຳຮ້ອງຂໍກ່ຽວກັບການປະຕິບັດຄຳຕັດສິນຂອງສານຕ່າງປະເທດ ເນື່ອງຈາກ ເຫັນວ່າ ບໍ່ມີເຫດຜົນແລ້ວ ອົງການໃຈກາງປະສານງານ ຕ້ອງອອກຄຳສັ່ງລົບລ້າງ ຄຳສັ່ງຍຶດ ຫຼື ອາຍັດຊັບ ໂດຍໜ້າທີ່ ຫຼື ມອບໃຫ້ອົງການໄອຍະການປະຊາຊົນ ຫຼື ອົງການທີ່ທີ່ກ່ຽວຂ້ອງ ທີ່ໄດ້ອອກຄຳສັ່ງນັ້ນ ເປັນຜູ້ອອກຄຳສັ່ງລົບລ້າງ ໃນທັນໃດ.

**ມາດຕາ 34 ການມອບຊັບໃຫ້ລັດທີ່ຮ້ອງຂໍ**

ພາຍຫຼັງ ຄຳຕົກລົງຂອງສານໃຊ້ໄດ້ຢ່າງເດັດຂາດແລ້ວ ອົງການໃຈກາງປະສານງານ ຕ້ອງສະເໜີໃຫ້ກະຊວງການຕ່າງປະເທດ ປະສານສົມທົບກັບລັດທີ່ຮ້ອງຂໍ ເພື່ອກະກຽມ ແລະ ດຳເນີນການມອບຊັບໃຫ້ລັດທີ່ຮ້ອງຂໍ ພາຍໃນກຳນົດເວລາ ສາມສິບວັນ ຫຼື ພາຍໃນກຳນົດເວລາທີ່ໄດ້ບົ່ງໄວ້ໃນສົນທິສັນຍາ ນັບແຕ່ວັນໄດ້ອ່ານຄຳຕັດສິນ ເປັນຕົ້ນໄປ.

ອົງການໃຈກາງປະສານງານ ເປັນເຈົ້າການໃນການມອບຊັບໃຫ້ລັດທີ່ຮ້ອງຂໍ ໂດຍ ມີອົງການສືບສວນ-ສອບສວນ, ກະຊວງຍຸຕິທຳ, ກະຊວງການຕ່າງປະເທດ, ອົງການທີ່ກ່ຽວຂ້ອງ ແລະ ຜູ້ຕາງໜ້າລັດທີ່ຮ້ອງຂໍ ເຂົ້າຮ່ວມນຳ ແລະ ຕ້ອງເຮັດບົດບັນທຶກ.

## ພາກທີ III
## ການຮ້ອງຂໍການຮ່ວມມືທາງອາຍາ ຂອງ ສປປ ລາວ

**ມາດຕາ 35 ການປະກອບຄຳຮ້ອງຂໍການຮ່ວມມືທາງອາຍາ**

ການປະກອບຄຳຮ້ອງຂໍການຮ່ວມມືທາງອາຍາຈາກຕ່າງປະເທດ ແກ່ ສປປ ລາວ ໃຫ້ປະຕິບັດ ຕາມຫຼັກການທີ່ໄດ້ກຳນົດໄວ້ໃນມາດຕາ 9,10 ແລະ 11 ຂອງ ກົດໝາຍສະບັບນີ້.

**ມາດຕາ 36 ການພິຈາລະນາຂອງການດຳເນີນຄະດີອາຍາ**

ເມື່ອມີຄວາມຈຳເປັນ ໃຫ້ຕ່າງປະເທດໃຫ້ການຮ່ວມມືທາງອາຍາກ່ຽວກັບການປະກອບຫຼັກຖານ, ສົ່ງມອບເອກະ ສານຕຸລາການ, ການຍຶດ, ການອາຍັດ, ການຮິບຊັບ, ການປະຕິບັດຄຳຕັດສິນຂອງສານ ສປປ ລາວ ຫຼື ການຮ່ວມມືອື່ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 7 ຂອງກົດໝາຍສະບັບນີ້ ອົງການດຳເນີນຄະດີອາຍາ ຕ້ອງສະເໜີອົງການໃຈກາງປະສານງານ ໂດຍຜ່ານອົງການຈັດຕັ້ງຂັ້ນສູນກາງຂອງຕົນ ເພື່ອພິຈາລະນາຮ້ອງຂໍການຮ່ວມມືທາງອາຍາແກ່ ສປປ ລາວ.

**ມາດຕາ 37 ການພິຈາລະນາຂອງອົງການໃຈກາງປະສານງານ**

ພາຍຫຼັງ ໄດ້ຮັບຄຳຮ້ອງຂໍການຮ່ວມມືທາງອາຍາຈາກອົງການດຳເນີນຄະດີອາຍາ ອົງການໃຈກາງປະສານງານ ຕ້ອງຄົ້ນຄວ້າຄຳຮ້ອງຂໍດັ່ງກ່າວ ບົນພື້ນຖານ ຫຼັກການທີ່ໄດ້ກຳນົດໄວ້ໃນສົນທິສັນຍາ ລະຫວ່າງ ສປປ ລາວ ກັບລັດທີ່ຖືກຮ້ອງຂໍ ແລະ ມາດຕາ 8 ຂອງກົດໝາຍສະບັບນີ້ ເມື່ອເຫັນວ່າ ສອດຄ່ອງແລ້ວ ກໍສົ່ງຄຳຮ້ອງຂໍນັ້ນ ໄປລັດທີ່ຖືກຮ້ອງຂໍ ເພື່ອພິຈາລະນາ ໂດຍຜ່ານຊ່ອງທາງທີ່ສົນທິສັນຍາ ຫຼື ກົດໝາຍສະບັບນີ້ ໄດ້ກຳນົດໄວ້.

**ມາດຕາ 38 ການເຂົ້າຮ່ວມການພິຈາລະນາການປະຕິບັດຄຳຮ້ອງຂໍຢູ່ຕ່າງປະເທດ**

ເມື່ອມີຄວາມຈຳເປັນ ອົງການໃຈກາງປະສານງານ, ອົງການສືບສວນ-ສອບສວນ ພ້ອມດ້ວຍອົງການອື່ນທີ່ກ່ຽວຂ້ອງ ຕ້ອງເຂົ້າຮ່ວມການພິຈາລະນາກ່ຽວກັບການປະຕິບັດຄຳຮ້ອງຂໍການຮ່ວມມືທາງອາຍາ ຂອງລັດທີ່ຖືກຮ້ອງຂໍ ເຊັ່ນ ການຊອກຫາ

ຊັບທີ່ໄດ້ມາຈາກການກະທຳຜິດ ຫຼື ວັດຖຸທີ່ນຳໃຊ້ເຂົ້າໃນການກະທຳຜິດ, ການເອົາຄຳໃຫ້ການ, ການຍຶດ, ອາຍັດ ຫຼື ການຣິບຊັບ ເພື່ອຮັບປະກັນຜົນປະໂຫຍດໃນການດຳເນີນຄະດີອາຍາ ຢູ່ ສປປ ລາວ.

**ມາດຕາ 39 ການມອບໝາກຜົນຂອງການຮ່ວມມືທາງອາຍາ**

ພາຍຫຼັງ ໄດ້ຮັບໝາກຜົນຂອງການຮ່ວມມືທາງອາຍາແລ້ວ ອົງການໃຈກາງປະສານງານ ຕ້ອງມອບໝາກຜົນຂອງການຮ່ວມມື ໃຫ້ອົງການດຳເນີນຄະດີອາຍາທີ່ກ່ຽວຂ້ອງ ເພື່ອສືບຕໍ່ດຳເນີນຄະດີ ຕາມກົດໝາຍ.

# ພາກທີ IV
# ຂໍ້ຫ້າມ

**ມາດຕາ 40 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ການເຄື່ອນໄຫວວຽກງານການຮ່ວມມືທາງອາຍາລະຫວ່າງປະເທດ ສ້າງຜົນເສຍຫາຍໃຫ້ແກ່ລະບອບການເມືອງ, ຄວາມໝັ້ນຄົງຂອງລັດ, ສິດ ແລະ ພັນທະຂອງພົນລະເມືອງ ກໍ່ຄືຜົນປະໂຫຍດຂອງຊາດ;
2. ດຳເນີນການຮ່ວມມືທາງອາຍາລະຫວ່າງປະເທດ ທີ່ບໍ່ໄດ້ຮັບອະນຸຍາດຈາກລັດ;
3. ສ້າງອຸປະສັກ, ຂັດຂວາງວຽກງານ ການຮ່ວມມືທາງອາຍາລະຫວ່າງປະເທດ ທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;
4. ຂໍເອົາ, ທວງເອົາ, ໃຫ້ ຫຼື ຮັບສິນບົນຈາກບຸກຄົນອື່ນໃນວຽກງານ ການຮ່ວມມືທາງອາຍາລະຫວ່າງປະເທດ ເພື່ອຜົນປະໂຫຍດສ່ວນຕົວ;
5. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ສັນຍາ, ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 41 ຂໍ້ຫ້າມສຳລັບ ເຈົ້າໜ້າທີ່ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ**

ຫ້າມສຳລັບ ເຈົ້າໜ້າທີ່ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ຂອງລັດມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ, ບັງຄັບ, ນາບຂູ່ຜູ້ອື່ນ ເພື່ອຫາຜົນປະໂຫຍດສ່ວນຕົວ ແລະ ພັກພວກຂອງຕົນ;
2. ຂໍເອົາ, ທວງເອົາ, ຮັບ ຫຼື ໃຫ້ສິນບົນ ແລະ ຍັກຍອກຊັບ ຫຼື ຂອງກາງ ມາເປັນຂອງຕົນ;
3. ກົດໜ່ວງ, ຖ່ວງດຶງ, ແກ່ຍາວເວລາໃນການພິຈາລະນາການຮ່ວມມືທາງອາຍາລະຫວ່າງປະເທດ ຢ່າງບໍ່ມີເຫດຜົນ ໂດຍບໍ່ຖືກຕ້ອງຕາມກົດໝາຍ;
4. ເປີດເຜີຍຄວາມລັບກ່ຽວກັບ ວຽກງານ ການຮ່ວມມືທາງອາຍາລະຫວ່າງປະເທດ ທີ່ບໍ່ໄດ້ຮັບອະນຸຍາດຈາກອົງການລັດທີ່ກ່ຽວຂ້ອງ;
5. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ.

# ພາກທີ V
# ການຄຸ້ມຄອງ ແລະ ກວດກາ
## ໝວດທີ 1
## ການຄຸ້ມຄອງວຽກງານການຮ່ວມມືທາງອາຍາລະຫວ່າງປະເທດ

**ມາດຕາ 42 ອົງການຄຸ້ມຄອງວຽກງານການຮ່ວມມືທາງອາຍາລະຫວ່າງປະເທດ**

ລັດຖະບານແຫ່ງ ສປປ ລາວ ເປັນຜູ້ຄຸ້ມຄອງລວມສູນ ເປັນເອກະພາບໃນວຽກງານການຮ່ວມມືທາງອາຍາລະຫວ່າງປະເທດ ໂດຍມອບໃຫ້ອົງການໄອຍະການປະຊາຊົນສູງສຸດ ເປັນໃຈກາງ ແລະ ປະສານສົມທົບກັບ ກະຊວງປ້ອງກັນຄວາມສະຫງົບ, ສານປະຊາຊົນ, ກະຊວງການຕ່າງປະເທດ, ກະຊວງຍຸຕິທຳ ແລະ ອົງການປົກຄອງທ້ອງຖິ່ນ.

ອົງການຄຸ້ມຄອງວຽກງານການຮ່ວມມືທາງອາຍາລະຫວ່າງປະເທດ ປະກອບດ້ວຍ:

1. ອົງການໄອຍະການປະຊາຊົນສູງສຸດ;
2. ກະຊວງປ້ອງກັນຄວາມສະຫງົບ;
3. ສານປະຊາຊົນສູງສຸດ;
4. ກະຊວງການຕ່າງປະເທດ;
5. ກະຊວງຍຸຕິທຳ;
6. ອົງການປົກຄອງທ້ອງຖິ່ນ.

**ມາດຕາ 43 ສິດ ແລະ ໜ້າທີ່ ຂອງ ອົງການໄອຍະການປະຊາຊົນສູງສຸດ**

ໃນການຄຸ້ມຄອງວຽກງານການຮ່ວມມືທາງອາຍາລະຫວ່າງປະເທດ ອົງການໄອຍະການປະຊາຊົນສູງສຸດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ນະໂຍບາຍ ແລະ ກົດໝາຍ ກ່ຽວກັບວຽກງານການຮ່ວມມືທາງອາຍາລະຫວ່າງປະເທດຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
2. ປະສານສົມທົບກັບອົງການຕ່າງໆ ກ່ຽວກັບການຮ່ວມມືທາງອາຍາລະຫວ່າງປະເທດ;
3. ຮັບຄຳຮ້ອງຂໍ ກ່ຽວກັບ ການຮ້ອງຂໍການຮ່ວມມືທາງອາຍາ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;
4. ຊີ້ນຳ, ນຳພາ ແລະ ກວດກາ ອົງການໄອຍະການປະຊາຊົນທຸກຂັ້ນ ໃນການປະຕິບັດຄຳຮ້ອງຂໍການຮ່ວມມືທາງອາຍາ ເຊັ່ນ ເກັບໂຮມຂໍ້ມູນຫຼັກຖານ, ຍຶດ, ອາຍັດ ຊັບສິນ ແລະ ວັດຖຸສິ່ງຂອງ ຕາມຄຳຮ້ອງຂໍດັ່ງກ່າວ;
5. ແຈ້ງໃຫ້ກະຊວງການຕ່າງປະເທດຊາບກ່ຽວກັບການປະຕິບັດວຽກງານການຮ່ວມມືທາງອາຍາລະຫວ່າງປະເທດ ເປັນແຕ່ລະໄລຍະ ຫຼື ໃນກໍລະນີຮີບດ່ວນເພື່ອປະສານງານກັບລັດທີ່ຮ້ອງຂໍ;
6. ເກັບໂຮມຂໍ້ມູນ, ສະຖິຕິ ກ່ຽວກັບການຮ່ວມມືທາງອາຍາລະຫວ່າງປະເທດ ເພື່ອແຈ້ງໃຫ້ພາກສ່ວນທີ່ກ່ຽວຂ້ອງ ຊາບ;
7. ເຂົ້າຮ່ວມເຈລະຈາ, ປຶກສາຫາລື ສົນທິສັນຍາທະວິພາຄີ ຫຼື ພະຫຸພາຄີ ກ່ຽວກັບການຮ່ວມມືທາງອາຍາລະຫວ່າງປະເທດ;
8. ພົວພັນ ແລະ ຮ່ວມມືກັບຕ່າງປະເທດກ່ຽວກັບວຽກງານການຮ່ວມມືທາງອາຍາລະຫວ່າງປະເທດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

9. ສະຫຼຸບ ແລະ ລາຍງານວຽກງານກ່ຽວກັບການຮ່ວມມືທາງອາຍາລະຫວ່າງປະເທດ ຕໍ່ຂັ້ນເທິງຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

10. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

### ມາດຕາ 44 ສິດ ແລະ ໜ້າທີ່ ຂອງກະຊວງປ້ອງກັນຄວາມສະຫງົບ

ໃນການຄຸ້ມຄອງວຽກງານການຮ່ວມມືທາງອາຍາລະຫວ່າງປະເທດ ກະຊວງປ້ອງກັນຄວາມສະຫງົບ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ນະໂຍບາຍ ແລະ ລະບຽບກົດໝາຍ ກ່ຽວກັບວຽກງານການຮ່ວມມືລະຫວ່າງປະເທດ ທາງອາຍາ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ຊີ້ນໍາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດຄໍາຮ້ອງຂໍການຊ່ວຍເຫຼືອທາງອາຍາ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

3. ຮັບຄໍາຮ້ອງຂໍ ແລະ ສະເໜີ ໃຫ້ອົງການໃຈການປະສານງານ ກ່ຽວກັບ ການຮ້ອງຂໍການຊ່ວຍເຫຼືອທາງອາຍາ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;

4. ລວບລວມຂໍ້ມູນຫຼັກຖານ ແລະ ຍຶດ ຫຼື ອາຍັດຊັບ ທີ່ກ່ຽວຂ້ອງກັບຄະດີ ຕາມຄໍາຮ້ອງຂໍການ ຊ່ວຍເຫຼືອທາງອາຍາໃຫ້ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ;

5. ເຂົ້າຮ່ວມເຈລະຈາ, ປຶກສາຫາລື ສົນທິສັນຍາທະວິພາຄີ ຫຼື ພະຫຸພາຄີ ວ່າດ້ວຍການຊ່ວຍເຫຼືອທາງອາຍາ;

6. ພົວພັນ ແລະ ຮ່ວມມືກັບຕ່າງປະເທດກ່ຽວກັບວຽກງານການຮ່ວມມືລະຫວ່າງປະເທດທາງອາຍາ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

7. ສະຫຼຸບ ແລະ ລາຍງານວຽກງານກ່ຽວກັບການຮ່ວມມືລະຫວ່າງປະເທດທາງອາຍາຕໍ່ຂັ້ນເທິງຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

8. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

### ມາດຕາ 45 ສິດ ແລະ ໜ້າທີ່ ຂອງສານປະຊາຊົນສູງສຸດ

ໃນການຄຸ້ມຄອງວຽກງານການຮ່ວມມືທາງອາຍາລະຫວ່າງປະເທດ ສານປະຊາຊົນສູງສຸດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ນະໂຍບາຍ ແລະ ລະບຽບກົດໝາຍ ກ່ຽວກັບວຽກງານການຮ່ວມມືທາງອາຍາລະຫວ່າງປະເທດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ແນະນໍາທາງດ້ານວິຊາການ ການຮ່ວມມືທາງອາຍາລະຫວ່າງປະເທດ;

3. ເຂົ້າຮ່ວມເຈລະຈາ, ປຶກສາຫາລື ແລະ ມີຄໍາເຫັນກ່ຽວກັບສົນທິສັນຍາທະວິພາຄີ ຫລື ພະຫຸພາຄີ ວ່າດ້ວຍການຮ່ວມມືທາງອາຍາລະຫວ່າງປະເທດ;

4. ພົວພັນ ແລະ ຮ່ວມມືກັບຕ່າງປະເທດກ່ຽວກັບວຽກງານການການຮ່ວມມືທາງອາຍາລະຫວ່າງປະເທດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

5. ສະຫຼຸບ ແລະ ລາຍງານວຽກງານກ່ຽວກັບການຮ່ວມມືທາງອາຍາລະຫວ່າງປະເທດ ຕໍ່ຂັ້ນເທິງຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

6. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

### ມາດຕາ 46 ສິດ ແລະ ໜ້າທີ່ ຂອງກະຊວງການຕ່າງປະເທດ

ໃນການຄຸ້ມຄອງວຽກງານການຮ່ວມມືທາງອາຍາລະຫວ່າງປະເທດ ກະຊວງການຕ່າງປະເທດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ນະໂຍບາຍ ແລະ ລະບຽບກົດໝາຍ ກ່ຽວກັບວຽກງານການຮ່ວມມືທາງອາຍາລະຫວ່າງປະເທດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
2. ພົວພັນ ແລະປະສານສົມທົບກັບລັດທີ່ຮ້ອງຂໍ ຕາມການສະເໜີຂອງອົງການໃຈກາງປະສານງານ;
3. ຮັບ ແລະ ສົ່ງ ຄໍາຮ້ອງຂໍການຮ່ວມມືທາງອາຍາລະຫວ່າງປະເທດ ໄປຍັງອົງການໃຈກາງປະສານງານ;
4. ປະສານສົມທົບອົງການໃຈກາງປະສານງານ ກ່ຽວກັບການສົ່ງຫຼັກຖານ, ການຍຶດ ແລະ ການຮິບຊັບ ເພື່ອປະຕິບັດຄໍາຮ້ອງຂໍ ການຮ່ວມມືທາງອາຍາລະຫວ່າງປະເທດ;
5. ແຈ້ງ ຫຼື ຮັບແຈ້ງ ກ່ຽວກັບການປະຕິບັດຄໍາຮ້ອງຂໍ ການຮ່ວມມືທາງອາຍາລະຫວ່າງປະເທດ ຢູ່ລັດທີ່ຮ້ອງຂໍ ໃຫ້ອົງການໃຈກາງປະສານງານ ແລະ ພາກສ່ວນທີ່ກ່ຽວຂ້ອງຊາບ;
6. ເຂົ້າຮ່ວມເຈລະຈາ, ປຶກສາຫາລື ສົນທິສັນຍາ ແລະ ສັນຍາສາກົນ ກ່ຽວກັບການຮ່ວມມືທາງອາຍາລະຫວ່າງປະເທດ ຕາມການມອບໝາຍ ຂອງລັດຖະບານ;
7. ພົວພັນ ແລະ ຮ່ວມມືກັບຕ່າງປະເທດກ່ຽວກັບວຽກງານການຮ່ວມມືທາງອາຍາລະຫວ່າງປະເທດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
8. ສະຫຼຸບ ແລະ ລາຍງານວຽກງານກ່ຽວກັບການຮ່ວມມືທາງອາຍາລະຫວ່າງປະເທດ ຕໍ່ຂັ້ນເທິງຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
9. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

### ມາດຕາ 47 ສິດ ແລະ ໜ້າທີ່ ຂອງ ກະຊວງຍຸຕິທໍາ

ໃນການຄຸ້ມຄອງວຽກງານການຮ່ວມມືທາງອາຍາລະຫວ່າງປະເທດ ກະຊວງຍຸຕິທໍາ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ນະໂຍບາຍ ແລະ ລະບຽບກົດໝາຍ ກ່ຽວກັບວຽກງານການຮ່ວມມືທາງອາຍາລະຫວ່າງປະເທດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
2. ເຂົ້າຮ່ວມ, ຊຸກຍູ້, ຊ່ວຍເຫຼືອ ແລະ ປະສານສົມທົບກັບຂະແໜງການ ແລະ ອົງການຈັດ ຕັ້ງທີ່ກ່ຽວຂ້ອງກັບວຽກງານການຮ່ວມມືທາງອາຍາລະຫວ່າງປະເທດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
3. ເກັບກໍາສະຖິຕິ, ຂໍ້ມູນ ຂ່າວສານ ກ່ຽວກັບການປະຕິບັດວຽກງານ ການຮ່ວມມືທາງອາຍາລະຫວ່າງປະເທດ;
4. ເຂົ້າຮ່ວມເຈລະຈາ, ປຶກສາຫາລື ແລະ ມີຄໍາເຫັນກ່ຽວກັບສົນທິສັນຍາທະວິພາຄີ ຫຼື ພະຫຸພາຄີ ວ່າດ້ວຍການຮ່ວມມືທາງອາຍາລະຫວ່າງປະເທດ;
5. ພົວພັນ ແລະ ຮ່ວມມືກັບຕ່າງປະເທດກ່ຽວກັບວຽກງານການຮ່ວມມືທາງອາຍາລະຫວ່າງປະເທດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
6. ສະຫຼຸບ ແລະ ລາຍງານວຽກງານກ່ຽວກັບການຮ່ວມມືທາງອາຍາລະຫວ່າງປະເທດ ຕໍ່ຂັ້ນເທິງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
7. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 48 ສິດ ແລະ ໜ້າທີ່ ຂອງອົງການປົກຄອງທ້ອງຖິ່ນ**

ອົງການປົກຄອງທ້ອງຖິ່ນ ມີສິດ ແລະ ໜ້າທີ່ ໃຫ້ການຊ່ວຍເຫຼືອ ກະຊວງປ້ອງກັນຄວາມສະຫງົບ, ໄອຍະການປະຊາຊົນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ກ່ຽວກັບວຽກງານການຮ່ວມມືທາງອາຍາລະຫວ່າງປະເທດ ຕາມພາລະບົດບາດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

## ໝວດທີ 2
## ການກວດກາວຽກງານການຮ່ວມມືທາງອາຍາລະຫວ່າງປະເທດ

**ມາດຕາ 49 ອົງການກວດກາວຽກງານການຮ່ວມມືທາງອາຍາລະຫວ່າງປະເທດ**

ອົງການກວດກາວຽກງານການຮ່ວມມືທາງອາຍາລະຫວ່າງປະເທດ ປະກອບດ້ວຍ:

ອົງການກວດກາພາຍໃນ ແລະ ອົງການກວດກາພາຍນອກ

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງທີ່ໄດ້ກຳນົດໄວ້ໃນມາດຕາ 32 ຂອງກົດໝາຍສະບັບນີ້;
2. ອົງການກວດກາພາຍນອກ ຊຶ່ງແມ່ນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ອົງການກວດກາລັດຖະບານ.

**ມາດຕາ 50 ເນື້ອໃນການກວດກາ**

ການກວດກາມີເນື້ອໃນ ດັ່ງນີ້:

1. ການປະຕິບັດສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ ທີ່ກ່ຽວກັບ ວຽກງານການຮ່ວມມືທາງອາຍາລະຫວ່າງປະເທດ;
2. ການປະຕິບັດນະໂຍບາຍ ແລະ ການນຳໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບວຽກງານການຮ່ວມມືທາງອາຍາລະຫວ່າງປະເທດ;
3. ບັນຫາອື່ນທີ່ພົວພັນກັບວຽກງານການຮ່ວມມືທາງອາຍາລະຫວ່າງປະເທດ.

**ມາດຕາ 51 ຮູບການກວດກາ**

ການກວດກາມີ 3 ຮູບການ ດັ່ງນີ້:

1. ການກວດກາຕາມແຜນການປົກກະຕິ ແມ່ນການກວດກາຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ.
2. ການກວດການອກແຜນການ ໂດຍແຈ້ງໃຫ້ຮູ້ລ່ວງໜ້າແມ່ນການກວດການອກແຜນການ ໂດຍມີການແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.
3. ການກວດກາແບບກະທັນຫັນ ແມ່ນການກວດກາຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ໃນການດຳເນີນການກວດກາວຽກງານການຮ່ວມມືທາງອາຍາລະຫວ່າງປະເທດ ໃຫ້ປະຕິບັດຖືກຕ້ອງຕາມກົດໝາຍຢ່າງເຂັ້ມງວດ.

# ພາກທີ VI
# ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 52 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດກົດໝາຍ ສະບັບນີ້ ເປັນຕົ້ນ ໃຫ້ຄວາມຮ່ວມມືປະສານງານ, ໃຫ້ຂໍ້ມູນທີ່ຖືກຕ້ອງ ແລະ ວ່ອງໄວ ໃນການຮ່ວມມືທາງອາຍາລະຫວ່າງປະເທດ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 53 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສັຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມແຕ່ກໍລະນີເບົາ ຫຼື ໜັກ.

# ພາກທີVII
# ບົດບັນຍັດສຸດທ້າຍ

**ມາດຕາ 54 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ,ອົງການໄອຍະການປະຊາຊົນສູງສຸດ, ກະຊວງປ້ອງກັນຄວາມສະຫງົບ,ສານປະຊາຊົນສູງສຸດ, ກະຊວງການຕ່າງປະເທດ, ກະຊວງຍຸຕິທຳ, ອົງການອື່ນທີ່ກ່ຽວຂ້ອງແລະອົງການປົກຄອງທ້ອງຖິ່ນ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 55 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ລ້ວນແລ້ວແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**